# ຈະປະທ້ວງຄຳຕັດສິນໃສ່ຄຳຮ້ອງທວງເອົາເງິນຂອງທ່ານຂອງກົມແຮງງານ ແລະ ອຸດສາຫະກັມໄດ້ແນວໃດ



## ຄຳປະທ້ວງແມ່ນຫຍັງ?

ຄຳປະທ້ວງແມ່ນໜັງສືກ່າວວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນຂອງ ຄຳຮ້ອງທວງເອົາເງິນທົດແທນແຮງງານຂອງທ່ານ. ຄຳປະທ້ວງຂອງທ່ານຕ້ອງຖືກຮັບເອົາພາຍໃນ 60 ວັນຂອງການໄດ້ຮັບຄຳຕັດສິນຂອງທ່ານ.

ຄຳປະທ້ວງຂອງທ່ານຄວນຈະລວມເອົາ:

- ຊື່ ແລະ ເລກທວງເອົາເງິນຂອງທ່ານ.
- ວັນທີຂອງຄຳຕັດສິນຂອງກົມ.
- ລວມທັງໃບລາຍງານຂອງຜູ້ໃຫ້ບໍຣິການຕ່າງໆ ຫລື ຣາຍລະອຽດອື່ນໆ ທີ່ທ່ານເຊື່ອວ່າໄດ້ສະແດງໃຫ້ເຫັນວ່າ ຄ ຳຕັດສິນແມ່ນຜິດ.

## ຂ້າພະເຈົ້າຄວນຈະສົ່ງຄຳປະທ້ວງ ຫລື ຄຳອຸທອນຂອງຂ້າພະເຈົ້າໄປໃສ?

- ສົ່ງໜັງສືຄຳປະທ້ວງໄດ້ທາງອອນລາຍຜ່ານ Claim and Account Center (ສູນຈັດການຄຳຮ້ອງທວງເອົາແລະບັນຊີ) ທີ່ເວັບໄຊ **https://secure.Lni.wa.gov** (ທ່ານຈຳຕ້ອງຕັ້ງບັນຊີພ້ອມກັບລະຫັດຜ່ານເພື່ອນຳໃຊ້ວິທີການນີ້). ຫລື
- ສົ່ງໜັງສືຄຳປະທ້ວງໄປທີ່: Department of Labor & Industries, P.O. Box 44291, Olympia WA 98504-4291. ຫລື
- ສົ່ງໜັງສືຄຳອຸທອນໄປຫາ Board of Industrial Insurance Appeals (BIIA), Executive Secretary, P.O. Box 42401, Olympia WA 98504-2401, ຫລື ຍື່ນຄຳອຸທອນຂອງທ່ານໃສ່ໃນຟອມເອເລກໂຕຣນິກຊຶ່ງຈະພົບເຫັນຢູ່ທີ່ **www.BIIA.wa.gov**. (Labor & Industries [ກົມແຮງງານ ແລະ ອຸດສາຫະກັມ] ຈະບໍ່ສາມາດທີ່ຈະແກ້ໄຂຄວາມຂ້ອງໃຈຂອງທ່ານໄດ້ນອກຈາກຈະຖືກສັ່ງໃຫ້ເຮັດໂດຍ ຄະນະກັມມະການການອຸທອນຂອງປະກັນພັຍອຸດສາຫະກັມ [Board of Industrial Insurance Appeals, BIIA].)

## ແມ່ນຫຍັງຈະເກີດຂຶ້ນເມື່ອເວລາກົມໄດ້ຮັບຄຳປະທ້ວງຂອງ ຂ້າພະເຈົ້າ?

ຜູ້ຈັດການຄຳຮ້ອງທວງເອົາຂອງທ່ານຈະກວດເບິ່ງສຳນວນຄຳຮ້ອງທວງເອົາຂອງທ່ານ ແລະຈະເຮັດແນວນຶ່ງຂອງສິ່ງຕໍ່ລົງໄປນີ້:

1. ປ່ຽນແປງຄຳຕັດສິນດັ້ງເດີມ. ທ່ານຈະໄດ້ຮັບໜັງສື ຫລື ຄຳສັ່ງໃບໃໝ່, ຫລື ທັງສອງຢ່າງ, ພ້ອມທັງຄຳຕັດສິນໃບໃໝ່.
2. ຕັດສິນວ່າຄຳຕັດສິນດັ້ງເດີມແມ່ນຖືກຕ້ອງ. ທ່ານຈະໄດ້ຮັບຄຳສັ່ງກ່າວວ່າ ຄຳຕັດສິນແມ່ນຖືກຕ້ອງ. ທ່ານຈະອຸທອນຄຳສັ່ງໃໝ່ອັນນີ້ໄດ້ໂດຍການຂຽນໜັງສືໄປຫາຄະນະກັມມະການການອຸທອນຂອງປະກັນພັຍອຸດສາຫະກັມ (BIIA) ຖ້າຫາກວ່າທ່ານຍັງບໍ່ເຫັນພ້ອມນຳຢູ່. ຂອບເຂດເວລາ ແລະ ທີ່ຢູ່ທາງໄປສະນີສຳລັບການອຸທອນຈະມີຢູ່ໃນໃບຄຳສັ່ງ.
3. ຕັດສິນວ່າຕ້ອງການຣາຍຣະອຽດເພີ້ມເຕີມອີກ. ທ່ານຈະໄດ້ຮັບຄຳສັ່ງວາງຄຳຕັດສິນໃຫ້ໂຈະໄວ້ກ່ອນ, ໜັງສືຂໍເອົາຣາຍຣະອຽດເພີ້ມເຕີມ, ຫລືທັງສອງຢ່າງ. ຜູ້ຈັດການຄຳຮ້ອງທວງເອົາຈະຮ້ອງຂໍເອົາຣາຍຣະອຽດເພີ້ມເຕີມຈາກທ່ານ, ທ່ານໝໍຂອງທ່ານ, ຫລື ນາຍຈ້າງຂອງທ່ານ.

ຄຳຕັດສິນໃສ່ຄຳປະທ້ວງຂອງທ່ານສາມາດໃຊ້ເວລາ 30 ຫາ 60 ວັນ ຫລື ດົນນານກວ່ານັ້ນອີງຕາມວ່າຈະຕ້ອງການຣາຍຣະອຽດເພີ້ມເຕີມ ຫລືບໍ່. ຖ້າຫາກວ່າທ່ານບໍ່ໄດ້ຮັບຄຳຕອບພາຍໃນ 30 ວັນຫລັງຈາກທີ່ສົ່ງ ຄຳປະທ້ວງຂອງທ່ານ, ກະຣຸນາຕິດຕໍ່ຫາຜູ້ຈັດການຄຳຮ້ອງທວງເອົາຂອງທ່ານ.

## ຖ້າຫາກວ່າຂ້າພະເຈົ້າບໍ່ປະທ້ວງ ຫລື ອຸທອນເດ, ຫລື ເຮັດຫລັງຈາກ 60 ວັນ?

ຖ້າຫາກວ່າທ່ານບໍ່ປະທ້ວງ ຫລືອຸທອນພາຍໃນຣະຍະເວລາ 60 ວັນ, ຄຳຕັດສິນຂອງກົມຈະກາຍເປັນສຸດຂາດ. ອັນນີ້ໝາຍຄວາມວ່າ **ທ່ານຈະບໍ່ປະທ້ວງ ຫລື ອຸທອນຄຳຕັດສິນໄດ້ໃນພາຍພາກໜ້າ**.

## ຖ້າຫາກວ່າຂ້າພະເຈົ້າມີຄຳຖາມ ຫລື ຄວາມຂ້ອງໃຈກ່ຽວກັບຄຳຮ້ອງທວງເອົາເງິນຂອງຂ້າພະເຈົ້າເດ, ຂ້າພະເຈົ້າຄວນຈະຕິດຕໍ່ໄປຫາໃຜ?

- ຜູ້ຈັດການຄຳຮ້ອງທວງເອົາ ຜູ້ກຳສຳນວນເອກສານຂອງທ່ານ, ສຳລັບ ຄຳຖາມອັນເຈາະຈົງຕໍ່ຄຳຮ້ອງທວງເອົາຂອງທ່ານ. ຜູ້ຈັດການຄຳຮ້ອງທວງເອົາຂອງທ່ານມີການເຂົ້າເຖິງນາຍແປພາສາເພື່ອຈະຊ່ວຍເຫລືອນຳການໂທສາຍ.
- ເລກໂທຟຣີຂອງກົມ, 1-800-547-8367, ສຳລັບຣາຍຣະອຽດກ່ຽວກັບຄຳຮ້ອງທວງເອົາທົ່ວໄປ. ເລກນີ້ໃຫ້ທາງເລືອກເພື່ອຈະຟັງຣາຍຣະອຽດເປັນພາສາສະແປນິຊ.

**ເພື່ອຄວາມຊ່ວຍເຫລືອເພີ້ມເຕີມ, ທ່ານຄວນຈະປຶກສານຳບ່ອນບໍຣິການຟຣີຕໍ່ລົງໄປນີ້ໄດ້ອີກຄືກັນ:**

- Project Help (ໂຄງການຄວາມຊ່ວຍເຫຼືອ) ທີ່ເລກ 1-800-255-9752. ການບໍຣິການແປພາສາອາດຈະຕ້ອງການ.
- ໂຄງການຄວາມຊ່ວຍເຫຼືອທາງກົດໝາຍແລະການສົ່ງຕໍ່ (Coordinated Legal Education, Advice and Referral, CLEAR) ທີ່ເລກ 1-888-201-1014. ການບໍຣິການອັນນີ້ໃຫ້ຄຳແນະນຳທາງ ໂທຣະສັບ ແລະ ການສົ່ງຕໍ່ໄປຫາພະນັກງານຊ່ວຍຄົນຣາຍໄດ້ຕ່ຳໃນວັນກາງອາທິດ, ຕາມປົກກະຕິຣະຫວ່າງ 9:15 a.m. ແລະ 12:15 p.m. ຣາຍຣະອຽດຈະມີໄວ້ໃຫ້ເປັນພາສາສະແປນິຊ.

*ການຕິດຕໍ່ໄປຫາ ໂຄງການຄວາມຊ່ວຍເຫຼືອ CLEAR ຈະບໍ່ຕົກລົງ ຄຳປະທ້ວງ ຫລື ການອຸທອນຂອງຄຳຕັດສິນຂອງກົມ, ຈົ່ງປະຕິບັດຕາມຂັ້ນຕອນກ່າວຢູ່ໃນເຈັ້ຽຄວາມຈິງໃບນີ້.*

PUBLICATION F242-363-261 (Laotian) [04-2019]

Washington State Department of
Labor & Industries
*Workers' Compensation Services*

*ຮູບຮ່າງແບບອື່ນສຳລັບບຸກຄົນຜູ້ທີ່ມີຄວາມເສັຽອົງຄະກໍມີໄວ້ໃຫ້ຕາມ ຄຳຮ້ອງຂໍ. ຈົ່ງໂທຫາ 1-800-547-8367. ຜູ້ໃຊ້ຣະບົບ TDD, ຈົ່ງໂທຫາ 360-902-5797.*
L&I *(ກົມແຮງງານ ແລະ ອຸດສາຫະກັມ) ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ.*